ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

---

ກະຊວງການເງິນ

1390

ເລກທີ________/ກງ,

ນະຄອນຫລວງວຽງຈັນ, ວັນທີ 09 JUN 2011

# ບົດແນະນຳຂອງລັດຖະມົນຕີ ວ່າການກະຊວງການເງິນ ກ່ຽວກັບ ການຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ,ລົງວັນທີ 01.03.2011 ວ່າດ້ວຍ ການປັບປຸງອັດຕາ ອາກອນຕົວເລກທຸລະກິດ, ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນ .

ເຖິງ : - ຫົວໜ້າ ກົມງົບປະມານ,

- ຫົວໜ່າ ກົມສ່ວຍສາອາກອນ,
- ຫົວໜ້າ ກົມພາສີ,
- ຫົວໜ້າ ພະແນກການເງິນປະຈຳແຂວງ ແລະ ນະຄອນຫລວງ,
- ຫົວໜ້າ ກົມການເງິນບັນດາກະຊວງ ແລະ ອົງການທຽບເທົ່າ,
- ຫົວໜ້າ ການເງິນວິສາຫະກິດ ຂອງນັກລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ,
- ຫົວໜ້າ ການເງິນຂອງ ອົງການຈັດຕັ້ງຕ່າງໆ ທັງພາກລັດ ແລະ ເອກະຊົນ ລວມທັງ ອົງການຈັດຕັ້ງຂອງຕ່າງປະເທດທີ່ມີສຳນັກງານຕັ້ງຢູ່ໃນ ສປປ ລາວ .

- ອີງຕາມ ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005 ;
- ອີງຕາມ ກົດວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 ;
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 01.03.2011 ວ່າດ້ວຍ ການປັບປຸງອັດຕາອາກອນຕົວເລກທຸລະກິດ, ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນ ;
- ອີງຕາມ ແຈ້ງການຂອງຄະນະເລຂາທິການລັດຖະບານ ສະບັບເລກທີ 940/ຄລບ, ລົງວັນທີ 13.5.2011 ເລື່ອງກາຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 01.03.2011 ວ່າດ້ວຍ ການປັບປຸງອັດຕາອາກອນຕົວເລກທຸລະກິດ, ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນ .

ເພື່ອຮັບປະກັນ ໃນການຈັດຕັ້ງປະຕິບັດ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 01.03.2011 ວ່າດ້ວຍ ການປັບປຸງອັດຕາອາກອນຕົວເລກທຸລະກິດ, ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນ ໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ຮັບປະກັນໃຫ້ແກ່ການຄິດໄລ່ ເກັບອາກອນ ໃຫ້ຖືກຕ້ອງ ເພື່ອສາມາດມອບເຂົ້າງົບປະມານຢ່າງຄົບຖ້ວນ ແລະ ທັນຕາມກຳນົດເວລາ .

**ລັດຖະມົນຕີ ວ່າການກະຊວງການເງິນ ອອກບົດແນະນຳ ດັ່ງນີ້ :**

1. ຍົກເລີກການນຳໃຊ້ອັດຕາອາກອນຕົວເລກທຸລະກິດ 5% ແລ້ວມານຳໃຊ້ອັດຕາດຽວ 10% ເພື່ອຄິດໄລ່ເກັບຈາກການນຳເຂົ້າສິນຄ້າ ເຄື່ອງຂອງ ມາຈາກຕ່າງປະເທດ ແລະ ການສະໜອງສິນຄ້າ ຫລື ການບໍລິການຢູ່ພາຍໃນປະເທດ ນຳຫົວໜ່ວຍທຸລະກິດ ທີ່ບໍ່ເຂົ້າຢູ່ໃນລະບົບອາກອນມູນຄ່າເພີ່ມ .

2. ໃຫ້ຄິດໄລ່ເກັບອາກອນກຳໄລ ນຳຫົວໜ່ວຍທຸລະກິດທີ່ມີຖານະເປັນນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ໃນອັດຕາ 28% ( ຊາວແປດສ່ວນຮ້ອຍ ) ລວມທັງຫົວໜ່ວຍທຸລະກິດຂອງຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ລົງທຶນ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 .

ສຳລັບຫົວໜ່ວຍທຸລະກິດ ຊຶ່ງມີຖານະເປັນນິຕິບຸກຄົນ ທີ່ຜະລິດຢາສູບທັງພາຍໃນ ແລະ ຕ່າງປະເທດ ໃຫ້ເສຍອາກອນກຳໄລໃນອັດຕາ 30% ( ສາມສິບສ່ວນຮ້ອຍ ), ໃນນີ້ 2% ໃຫ້ມອບເຂົ້າກອງທຶນຄວບຄຸມຢາສູບ ຕາມມາດຕາ 46 ຂອງກົດໝາຍວ່າດ້ວຍການຄວບຄຸມຢາສູບ, ການເສຍອາກອນກຳໄລຂອງທຸລະກິດຜະລິດ ແລະ ຈຳໜ່າຍຢາສູບ ແມ່ນລວມທັງຫົວໜ່ວຍທຸລະກິດຂອງຕ່າງປະເທດ ທີ່ໄດ້ຮັບອະນຸຍາດໃຫ້ລົງທຶນຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 .

3. ໃຫ້ຄິດໄລ່ເກັບອາກອນກຳໄລ ນຳວິສາຫະກິດສ່ວນບຸກຄົນ ແລະ ຜູ້ປະກອບອາຊີບອິດສະຫລະ ຕາມອັດຕາທະວີຄູນ ແຕ່ 0% ຫາ 28% ຕາມຕາຕະລາງ ດັ່ງລຸ່ມນີ້ :

| ຂັ້ນ | ຖານກຳໄລແຕ່ລະຂັ້ນ | ພື້ນຖານຄິດໄລ່ | ອັດຕາອາກອນ | ອາກອນກຳໄລແຕ່ລະຂັ້ນ | ອາກອນທັງໝົດທີ່ຕ້ອງຈ່າຍ |
|---|---|---|---|---|---|
| 1 | ແຕ່ 3.600.000 ກີບລົງມາ | 3.600.000 ກີບ | 0% | 0 ກີບ | 0 ກີບ |
| 2 | ແຕ່ 3.600.001- 8.000.000 ກີບ | 4.400.000 ກີບ | 5% | 220.000 ກີບ | 220.000 ກີບ |
| 3 | ແຕ່ 8.000.001- 15.000.000 ກີບ | 7.000.000 ກີບ | 10% | 700.000 ກີບ | 920.000 ກີບ |
| 4 | ແຕ່ 15.000.001- 25.000.000 ກີບ | 10.000.000 ກີບ | 15% | 1.500.000 ກີບ | 2.420.000 ກີບ |
| 5 | ແຕ່ 25.000.001-40.000.000 ກີບ | 15.000.000 ກີບ | 20% | 3.000.000 ກີບ | 5.420.000 ກີບ |
| 5 | ແຕ່ 40.000.001- ກີບ ຂຶ້ນໄປ | ................ | 28% | ................ | .............. |

4. ໃຫ້ຄິດໄລ່ເກັບ ອາກອນລາຍໄດ້ຈາກເງິນເດືອນ ນຳຜູ້ມີລາຍໄດ້ຈາກເງິນເດືອນ, ຄ່າແຮງງານ ທີ່ເປັນຄົນລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ແລະ ຄົນທີ່ບໍ່ມີສັນຊາດ ທຸກຄົນທີ່ມີລາຍໄດ້ ຈາກການເຄື່ອນໄຫວວຽກງານ ຫລື ອອກແຮງງານຢູ່ ສປປ ລາວ ຕາມອັດຕາທະວີຄູນ ຢ່າງເປັນເອກະພາບກັນ ແຕ່ 0% ຫາ 28% ຕາມ ຕາຕະລາງດັ່ງລຸ່ມນີ້ :

| ຂັ້ນ | ຖານເງິນເດືອນແຕ່ລະຂັ້ນ | ພື້ນຖານ ຄິດໄລ່ | ອັດຕາ ອາກອນ | ອາກອນ ແຕ່ລະຂັ້ນ | ອາກອນທັງໝົດ |
|---|---|---|---|---|---|
| 1 | ແຕ່ 1.000.000 ກີບ ລົງມາ | 1.000.000 ກີບ | 0% | 0 ກີບ | |
| 2 | ແຕ່ 1.000.001 - 3.000.000 ກີບ | 2.000.000 ກີບ | 5% | 100.000 ກີບ | 100.000 ກີບ |
| 3 | ແຕ່ 3.000.001 - 6.000.000 ກີບ | 3.000.000 ກີບ | 10% | 300.000 ກີບ | 400.000 ກີບ |
| 4 | ແຕ່ 6.000.001 - 12.000.000 ກີບ | 6.000.000 ກີບ | 15% | 900.000 ກີບ | 1.300.000 ກີບ |
| 5 | ແຕ່ 12.000.001 - 24.000.000 ກີບ | 12.000.000 ກີບ | 20% | 2.400.000 ກີບ | 3.700.000 ກີບ |
| 6 | ແຕ່ 24.000.001 - 40.000.000 ກີບ | 16.000.000 ກີບ | 25% | 4.000.000 ກີບ | 7.700.000 ກີບ |
| 6 | ແຕ່ 40.000.001 ກີບ ຂຶ້ນໄປ | .................. | 28% | ................ | |

5. ຂັ້ນຕອນການຈັດຕັ້ງປະຕິບັດ :

5.1 ອັດຕາອາກອນຕົວເລກທຸລະກິດ ໃຫ້ນຳໃຊ້ອັດຕາດຽວ 10 % ເພື່ອຄິດໄລ່ເກັບນັບແຕ່ວັນທີ 01 ຕຸລາ 2011 ເປັນຕົ້ນໄປ ;

5.2 ອັດຕາອາກອນກຳໄລຂອງຫົວໜ່ວຍທຸລະກິດທີ່ມີຖານະເປັນນິຕິບຸກຄົນ ແລະ ວິສາຫະກິດສ່ວນບຸກຄົນ ໃຫ້ຄິດໄລ່ເກັບເປັນ 2 ໄລຍະ ຄືດັ່ງນີ້ :

- ງວດ I ຫາງວດ III ຂອງປີການບັນຊີ 2011, ແຕ່ວັນທີ 01 ມັງກອນ 2011 ຫາ ວັນທີ 30 ກັນຍາ 2011 ໃຫ້ຄິດໄລ່ ແລະ ແຈ້ງເສຍອາກອນກຳໄລ ຕາມອັດຕາທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 04/ສພຊ, ລົງວັນທີ 19 ພຶດສະພາ 2005 ;
- ສຳລັບງວດ IV ຂອງປີການບັນຊີ 2011 ( ແຕ່ວັນທີ 01 ຕຸລາ 2011 ຫາ ວັນທີ 31 ທັນວາ 2011 ) ເປັນຕົ້ນໄປ ໃຫ້ຄິດໄລ່ ແລະ ແຈ້ງເສຍອາກອນກຳໄລ ຕາມອັດຕາທີ່ໄດ້ກຳນົດໄວ້ໃນ ລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 01.03.2011 ວ່າດ້ວຍການປັບປຸງອັດຕາອາກອນຕົວເລກທຸລະກິດ, ອາກອນກຳໄລ ແລະ ອາກອນລາຍໄດ້ຈາກເງິນເດືອນ .

5.3 ອັດຕາອາກອນກຳໄລ ທີ່ໄດ້ ກຳນົດໃນລັດຖະບັນຍັດຂອງປະທານປະເທດ ສະບັບເລກທີ 001/ປປທ, ລົງວັນທີ 01.03.2011 ໃຫ້ປະຕິບັດຕໍ່ທຸກຫົວໜ່ວຍທຸລະກິດ, ລວມທັງຫົວໜ່ວຍທຸລະກິດທີ່ສ້າງຕັ້ງຂຶ້ນຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 ແລ້ວໃຫ້ປະຕິບັດການຄິດໄລ່ ແລະແຈ້ງເສຍອາກອນກຳໄລ ນັບແຕ່ປີການບັນຊີ 2011 ເປັນຕົ້ນໄປ.

ຫົວໜ່ວຍທຸລະກິດທີ່ສ້າງຕັ້ງຂຶ້ນກ່ອນການອອກກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 02/ສພຊ, ລົງວັນທີ 8 ກໍລະກົດ 2009 ໄດ້ປະກາດໃຊ້ ແມ່ນໃຫ້ເສຍອາກອນກຳໄລຕາມການອະນຸຍາດຂອງຄະນະກຳມະການຄຸ້ມຄອງການລົງທຶນ ຫລື ຕາມສັນຍາທີ່ໄດ້ເຊັນກັບລັດຖະບານ.

5.4 ອັດຕາອາກອນລາຍໄດ້ຈາກເງິນເດືອນ ໃຫ້ຄິດໄລ່ເກັບ ນຳຜູ້ມີລາຍໄດ້ຈາກເງິນເດືອນ ຫລື ຄ່າແຮງງານ ນັບແຕ່ເດືອນ ຕຸລາ 2011 ເປັນຕົ້ນໄປ.

6. ມອບໃຫ້ ຫ້ອງການກະຊວງ, ກົມງົບປະມານ, ກົມສ່ວຍສາອາກອນ, ຄັງເງິນແຫ່ງຊາດ, ກົມພາສີ ແນະນຳ ໃຫ້ແກ່ ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ, ຫົວໜ່ວຍງົບປະມານຂອງລັດບໍລິຫານ-ວິຊາການ ແລະ ວິສາຫະກິດອ້ອມຂ້າງສູນກາງ; ສ່ວນຢູ່ທ້ອງຖິ່ນ ແມ່ນມອບໃຫ້ພະແນກການເງິນປະຈຳແຂວງ ແລະ ນະຄອນຫລວງ ເປັນຜູ້ຈັດຕັ້ງ ແນະນຳໃຫ້ທຸກພາກສ່ວນຈັດຕັ້ງປະຕິບັດ ຢ່າງມີຄວາມເປັນເອກະພາບ ແລະ ໄດ້ຮັບຜົນຕາມລະດັບຄາດໝາຍ .

ລັດຖະມົນຕີວ່າການກະຊວງການເງິນ

ສົມດີ ດວງດີ